# ຂໍ້ແນະນຳໃນການຈັດກອງປະຊຸມ

# ລາຍງານຄືນ ແລະ ຮັບຮອງເອົາ

# ແຜນພັດທະນາກຸ່ມບ້ານ ຢູ່ຂັ້ນບ້ານ

*(ຈັດຂຶ້ນຢູ່ສະເພາະກຸ່ມບ້ານໃດ ທີ່ແຜນພັດທະນາກຸ່ມບ້ານຂອງເຂົາເຈົ້າ ມີການປ່ຽນແປງຢູ່ກອງປະຊຸມປະສານງານການວາງຂັ້ນເມືອງ, ສ່ວນຢູ່ກຸ່ມບ້ານອື່ນໆທີ່ບໍ່ມີການປ່ຽນແປງ ບໍ່ຈຳເປັນຈະຈັດກອງປະຊຸມດັ່ງກ່າວນີ້)*

**1. ຈຸດປະສົງ:**

- ເພື່ອຮັບປະກັນວ່າ ພໍ່ແມ່ປະຊາຊົນແຕ່ລະບ້ານ ຮັບຮູ້ກ່ຽວກັບແຜນການພັດທະນາກຸ່ມບ້ານຂອງເຂົາເຈົ້າ.
- ເພື່ອຮັບຮອງເອົາແຜນການພັດທະນາກຸ່ມຢ່າງເປັນທາງການ ໂດຍພໍ່ແມ່ປະຊາຊົນແຕ່ລະບ້ານ.
- ເພື່ອແຈ້ງໃຫ້ເຂົາເຈົ້າຊາບຕື່ມ ແຜນການລົງທຶນຂອງ ທລຍ ໂດຍສະເພາະບັນດາໂຄງການຍ່ອຍ ທີ່ຖືກຮັບຮອງແລ້ວ ຈະດຳເນີນການສຳຫລວດ ໃນຂັ້ນຕອນຕໍ່ໄປນີ້.

**2. ຜູ້ດຳເນີນ**

- ພະນັກງານພັດທະນາຊຸມຊົນເມືອງ (ສຳລັບບ້ານທີ່ໄດ້ຮັບໂຄງການຍ່ອຍ ຢູ່ໃນຮອບວຽນນີ້)
- ຜູ້ປະສານງານກຸ່ມມບ້ານ (ສຳລັບບ້ານທີ່ບໍ່ໄດ້ຮັບໂຄງການຍ່ອຍ ຢູ່ໃນຮອບວຽນນີ້)

**3. ຜູ້ເຂົ້າຮ່ວມກອງປະຊຸມ:**

- ຊາວບ້ານທັງໝົດ ຄວນເຂົ້າຮ່ວມ ຫຼື ຢ່າງໜ້ອຍ 50% ຂອງຈຳນວນຜູ້ໃຫ່ຍ (ອາຍຸ 15 ປີຂຶ້ນໄປ), ຢ່າງໜ້ອຍ 40% ຂອງຈຳນວນຜູ້ຍິງທີ່ເປັນຜູ້ໃຫ່ຍ (ອາຍຸ 15 ປີຂຶ້ນໄປ), ແລະ ຢ່າງໜ້ອຍ 60% ຂອງຈຳນວນຄອບຄົວຜູ້ທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມກອງປະຊຸມ ດັ່ງກ່າວນີ້ ເຊັ່ນດຽວກັນ, ຖ້າບໍ່ດັ່ງນັ້ນ ໃຫ້ເລື່ອນກອງປະຊຸມດັ່ງກ່າວນີ້ອອກໄປ".

**4. ກຳນົດເວລາ:**

- ເຄິ່ງມື້ (ກອງປະຊຸມດັ່ງກ່າວນີ້ ຄວນດຳເນີນພາຍໃນ 2 ອາທິດ ຫລັງຈາກກອງປະຊຸມປະສານງານການວາງພັດທະນາກຸ່ມບ້ານຂັ້ນເມືອງສຳເລັດ).

## 5. ສະຖານທີ່

- ສະໂມສອນ/ໂຮງຮຽນຂອງບ້ານ

## 6. ເນື້ອໃນ ແລະ ຂັ້ນຕອນໃນການດໍາເນີນກອງປະຊຸມ

- ນໍາສະເໜີແຜນພັດທະນາໂດຍລວມກຸ່ມບ້ານ;
- ນໍາສະເໜີແຜນການລົງທຶນຂອງ ທລຍ 4 ປີ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາກຸ່ມບ້ານ. ພ້ອມດຽວກັນແຈ້ງໃຫ້ເຫັນວ່າ ໂຄງການຍ່ອຍໃດ ຈະຈັດຕັ້ງປະຕິບັດໃນປີໃດ? ລວມທັງສະຖານທີ່ກໍ່ສ້າງໂຄງການ ແລະ ງົບປະມານສໍາລັບໂຄງການຍ່ອຍ.
- ນໍາສະເໜີ ຈຸດທີ່ມີການປ່ຽນແປງ ຢູ່ໃນແຜນການລົງທຶນຂອງ ທບຍ 4 ປີ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາກຸ່ມບ້ານ. (ການປ່ຽນແປງໝາຍເຖິງ ປ່ຽນແປງຈາກແຜນ ທີ່ ແຕ່ລະບ້ານພາຍໃນກຸ່ມບ້ານ ໄດ້ຮ່ວມກັນສ້າງຂື້ນ ຢູ່ກອງປະຊຸມວາງແຜນພັດທະນາບ້ານ) ໃນນີ້ອະທິບາຍກ່ຽວກັບເຫດຜົນທີ່ມີການກ່ຽນແປງນັ້ນ ໃຫ້ອີງໃສ່ບົດບັນທຶກຂອງກອງປະຊຸມປະ ສານງານການວາງແຜນຂັ້ນເມືອງ ທີ່ໄດ້ຈັດຂຶ້ນຜ່ານມານັ້ນ;
- ຖາມຄວາມເຫັນ ນໍາພໍແມ່ປະຊາຊົນພາຍໃນບ້ານ ຫຼື ຜູ່ເຂົ້າຮ່ວມປະຊຸມ ວ່າຮັບຮອງເອົາແຜນພັດທະນາກຸ່ມບ້ານຂອງເຂົາເຈົ້າ ຫຼື ບໍ?
- ລົງຄະແນນສຽງ ເພື່ອຮັບຮອງເອົາແຜນພັດທະນາກຸ່ມບ້ານ (ອາດຈະໃຊ້ເປັນແບບຍົກມື ຫລື ປ່ອນບັດ).
- ຜ່ານບົດບັນທຶກຂອງກອງປະຊຸມ ໃນກໍລະນີທີ່ບໍ່ຮັບຮອງເອົາແຜນພັດທະນາກຸ່ມບ້ານ ທີ່ມີການປ່ຽນແປງນັ້ນ ໃຫ້ອະທິບາຍເຫດຜົນວ່າຍ້ອນຫຍັງ ຊຸມຊົນຈຶ່ງບໍ່ຮັບຮອງເອົາແຜນດັ່ງກ່າວ.

## 7. ໜ້າວຽກ ທີ່ຈະຕ້ອງໄດ້ກະກຽມ ກ່ອນຈັດກອງປະຊຸມ:

| ລາຍການໜ້າວຽກ | ພາກສ່ວນຮັບຜິດຊອບ |
|---|---|
| • ກະກຽມແຜນພັດທະນາກຸ່ມບ້ານ ທີ່ໄດ້ສ້າງຮ່ວມກັນຢູ່ໃນກອງປະຊຸມວາງ ແຜນພັດທະນາກຸ່ມບ້ານ | ພັດທະນາຊຸມຊົນເມືອງ |
| • ສໍາເນົາເອົາບົດບັນທຶກກອງປະຊຸມປະສານງານວາງແຜນພັດທະນາກຸ່ມບ້ານຂັ້ນເມືອງ ທີ່ຈັດຂຶ້ນຜ່ານມາ (ເພາະວ່າຢູ່ໃນບົດບັນທຶກດັ່ງກ່າວໄດ້ມີການອະທິບາຍກ່ຽວກັບສາເຫດ ທີ່ພາໃຫ້ມີການປ່ຽນແປງຕ່າງໆ) | ພັດທະນາຊຸມຊົນເມືອງ |
| • ກະກຽມຮ່າງບົດບັນທຶກກອງປະຊຸມ ແລະ ແບບຟອມຕ່າງໆ | ທີມງານເມືອງ |
| • ແຈ້ງການໃຫ້ແຕ່ລະບ້ານ ກ່ຽວກັບການຈັດກອງປະຊຸມດັ່ງກ່າວ | ທີມງານເມືອງ |

8. **ໜ້າວຽກ ທີ່ຈະຕ້ອງໄດ້ປະຕິບັດຫລັງຈາກກອງປະຊຸມ:**

| <u>ລາຍການໜ້າວຽກ</u> | <u>ພາກສ່ວນຮັບຜິດຊອບ</u> |
|---|---|
| • ລາຍງານ ແລະ ສະເໜີ ຫາແຂວງ ແລະ ທີມງານບໍລິຫານ ທລຍ ສູນກາງ ເພື່ອ ຂໍ ຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ ຄືນໃໝ່ອີກຄັ້ງ. ຖ້າຫາກປະຊາຊົນ ບໍ່ຮັບຮອງເອົາແຜນພັດທະນາກຸ່ມບ້ານ. | ພັດທະນາຊຸມຊົນເມືອງ |
| • ເກັບຮັກສາບົດບັນທຶກກອງປະຊຸມໄວ້ໃຫ້ດີ | ພັດທະນາຊຸມຊົນເມືອງ |
| • ນໍາເອົາບົກບັນທຶກໄປຕິດໄວ້ ຢູ່ກະດານຂ່າວຂອງກຸ່ມບ້ານ | ພັດທະນາຊຸມຊົນເມືອງ |
| • ຈັດກອງປະຊຸມທົບທວນຄືນແຜນພັດທະນາກຸ່ມບ້ານຄືນໃໝ່. ຖ້າຫາກວ່າ ປະຊາຊົນບ້ານໃດນຶ່ງບໍ່ເຫັນດີ | ທີມງານ ທລຍ ເມືອງ |